ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 202 /ທຫລ

ນະຄອນຫຼວງວຽງຈັນ, ວັນທີ 01 JUL 2016

# ແຈ້ງການ

**ເຖິງ:** ບັນດາຮ້ານແລກປ່ຽນເງິນຕາເອກະຊົນ ໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການຊື້-ຂາຍເງິນຕາຕ່າງປະເທດ ກັບມວນຊົນ.

- ອີງຕາມກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 55/ສພຊ, ລົງວັນທີ 22 ທັນວາ 2014;
- ອີງຕາມຂໍ້ຕົກລົງວ່າດ້ວຍການດໍາເນີນທຸລະກິດແລກປ່ຽນເງິນຕາ ສະບັບເລກທີ 529 /ທຫລ, ລົງວັນທີ 01 ກໍລະກົດ 2016.

## ທະນາຄານແຫ່ງ ສປປ ລາວ ອອກແຈ້ງການ ດັ່ງນີ້:

1. ໃຫ້ຮ້ານແລກປ່ຽນເງິນຕາ ຊື້ເງິນຕາຕ່າງປະເທດຈາກມວນຊົນ ຢ່າງເປັນປົກກະຕິ ໂດຍໃຫ້ສໍາເນົາບັດປະຈໍາຕົວ ສໍາລັບຄົນລາວ ແລະ ສໍາເນົາໜັງສືຜ່ານແດນ (Passport) ສໍາລັບຄົນຕ່າງປະເທດ;
2. ໃຫ້ຮ້ານແລກປ່ຽນເງິນຕາ ຂາຍເງິນຕາຕ່າງປະເທດໃຫ້ມວນຊົນ ໃນວົງເງິນບໍ່ເກີນ 20.000.000 ກີບ (ຊາວລ້ານກີບ) ທຽບເທົ່າ ໂດຍໃຫ້ສໍາເນົາບັດປະຈໍາຕົວ ສໍາລັບຄົນລາວ ແລະ ສໍາເນົາໜັງສືຜ່ານແດນ (Passport) ສໍາລັບຄົນຕ່າງປະເທດ;
3. ໃຫ້ຮ້ານແລກປ່ຽນເງິນຕາ ກໍານົດອັດຕາແລກປ່ຽນ ຊື້-ຂາຍ ລະຫວ່າງ ເງິນກີບ ແລະ ເງິນໂດລາສະຫະລັດ ຂອງຕົນ ໃນຂອບເຂດບໍ່ເກີນ ±0,25% ທຽບໃສ່ອັດຕາແລກປ່ຽນອ້າງອີງ ທີ່ກົມນະໂຍບາຍເງິນຕາ ປະກາດອອກໃນແຕ່ລະວັນ ໃນສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍ ບໍ່ເກີນ 0,5%;
4. ໃຫ້ຮ້ານແລກປ່ຽນເງິນຕາ ກໍານົດອັດຕາແລກປ່ຽນ ລະຫວ່າງເງິນກີບ ແລະ ເງິນຕາຕ່າງປະເທດສະກຸນອື່ນດ້ວຍຕົນເອງ ໂດຍກໍານົດອັດຕາແລກປ່ຽນຊື້-ຂາຍ ລະຫວ່າງ ເງິນກີບ ແລະ ເງິນເອີໂຣ ໃນສ່ວນຕ່າງລະຫວ່າງອັດຕາຊື້-ອັດຕາຂາຍ ບໍ່ເກີນ 0,5%, ອັດຕາແລກປ່ຽນຊື້-ຂາຍ ລະຫວ່າງ ເງິນກີບ ແລະ ເງິນບາດ ໃນສ່ວນຕ່າງລະຫວ່າງ ອັດຕາຊື້-ອັດຕາຂາຍ ບໍ່ເກີນ 0,75% ແລະ ສະກຸນອື່ນ ແມ່ນກໍານົດບໍ່ເກີນ 2%;

5. ມອບໃຫ້ກົມນະໂຍບາຍເງິນຕາ ແລະ ທະນາຄານແຫ່ງ ສປປ ລາວ ປະຈຳແຕ່ລະພາກ ຕິດຕາມການຈັດຕັ້ງປະຕິບັດແຈ້ງການສະບັບນີ້ ຂອງຮ້ານແລກປ່ຽນເງິນຕາ ຢ່າງໃກ້ຊິດ ແລະ ເປັນປົກກະຕິ;
6. ແຈ້ງການສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ດຣ ສອນເພົາ ໄຟສິດ